ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------00000-------

ກະຊວງກະສິກຳ-ປ່າໄມ້ ເລກທີ 0054/ກປ

# ຂໍ້ຕົກລົງ

## ຂອງລັດຖະມົນຕີກະຊວງກະສິກຳ-ປ່າໄມ້

## ວ່າດ້ວຍສິດນຳໃຊ້ຊັບພະຍາກອນປ່າໄມ້ຕາມ ປະເພນີ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີເລກທີ 99/ນຍ, ລົງວັນທີ 19 ທັນວາ1992 ວ່າດ້ວຍທີ່ດິນ.
- ອີງຕາມຂໍ້ກຳນົດ ແລະໜ້າທີ່ການຄຸ້ມຄອງຊັບພະຍາກອນປ່າໄມ້ຢູ່ຂັ້ນບ້ານຂອງກະຊວງກະສິກຳ-ປ່າໄມ້ ສະບັບເລກທີ່ 0429/ກປ ລົງວັນທີ 18/06/1992.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 102/ນຍ ລົງວັນທີ 3 ກໍລະກົດ 1993 ວ່າດ້ວຍການຄຸ້ມຄອງ ບໍລິຫານຂອງອຳນາດການປົກຄອງບ້ານ.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 169/ນຍ ລົງວັນທີ່ 3 ພະຈິກ 1993 ວ່າດ້ວຍການຄຸ້ມຄອງ ແລະນຳໃຊ້ປ່າໄມ້ ແລະດິນປ່າໄມ້.
- ອີງຕາມດຳລັດ ຂອງນາຍົກ ລັດຖະມົນຕີ ເລກທີ 186/ນຍ ລົງວັນທີ 12 ຕຸລາ 1994 ວ່າດ້ວຍການແບ່ງດິນ-ແບ່ງປ່າເພື່ອການປູກໄມ້.

ລັດຖະມົນຕີວ່າການກະຊວງກະສິກຳ-ປ່າໄມ້

ອອກຂໍ້ຕົກລົງ ດັ່ງລຸ່ມນີ້ :

## ໝວດທີ I

## ຫລັກການລວມ

ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງ ສະບັບນີ້ ແມ່ນເພື່ອອະທິບາຍເນື້ອໃນລະອຽດຂອງບົດບັນຍັດ ຂອງດຳລັດຕ່າງໆ ທີ່ກ່າວມາຂ້າງເທິງ ກ່ຽວກັບສິດນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະຜະລິດຕະພັນຈາກປ່າໄມ້ ຕາມປະເພນີ ຊຶ່ງປະຊາຊົນລາວບັນດາຊົນເຜົ່າເຄີຍໄດ້ນຳໃຊ້ ມາເປັນເວລາດົນນານ ແລະບໍ່ຂັດກັບລະບຽບກົດໝາຍ ທີ່ລັດໄດ້ວາງອອກ.

ຂໍ້ຕົກລົງສະບັບນີ້ ແມ່ນວາງອອກບົນພື້ນຖານສະເພາະຂອງເນື້ອໃນມາດຕາ 4 ວັກ 3 ຂອງດຳລັດ, ນາຍົກລັດຖະມົນຕີ ເລກທີ 169/ນຍ, ລົງວັນທີ 03 ພະຈິກ 1993 ວ່າດ້ວຍການຄຸ້ມຄອງປ່າໄມ້ ແລະດິນປ່າໄມ້.

ມາດຕາ 2: ນິຍາມສິດຕາມປະເພນີ

ສິດຕາມປະເພນີ ແມ່ນບັນດາສິດ ແລະພັນທະຂອງບຸກຄົນ, ກຸ່ມຄົນ ຫລືຄອບຄົວ ພົນລະເມືອງລາວ ທີ່ມີມາບົນພື້ນຖານປະເພນີ ຊຶ່ງກົດໝາຍທີ່ປະກາດໃຊ້ຢູ່ ສປປລາວ ຮັບຮູ້ ແລະ ຄໍ້າປະກັນ. ໂດຍທົ່ວໄປແລ້ວ ສິດຕາມປະເພນີ ບໍ່ໄດ້ຂຽນເປັນລາຍລັກອັກສອນ, ແຕ່ມັນພັດແມ່ນສິດທີ່ແທ້ຈິງ ທີ່ຖືກນໍາໃຊ້ຕາມຂະບວນປະເພນີ ແລະ ບໍ່ຂັດກັບລະບຽບກົດໝາຍ ທີ່ ສປປລາວ ພວມໃຊ້ໃນປະຈຸບັນ.

ມາດຕາ 3: ນິຍາມປະເພນີ

ປະເພນີ ແມ່ນຜົນຂອງການນໍາໃຊ້ ແລະການປະຕິບັດຕົວຈິງ ຊຶ່ງມີລັກສະນະ ດັ່ງຕໍ່ໄປນີ້:

- ການນໍາໃຊ້ ແລະການປະຕິບັດຕົວຈິງ ແມ່ນຖືກປະຕິບັດ ຢ່າງສະໝໍ່າສະເໝີ ຕະຫລອດເວລາ ຢູ່ໃນເນື້ອທີ່ປ່າໄມ້ ແລະດິນປ່າໄມ້ທີ່ບໍ່ຫ້ວງຫ້າມ.
- ມີມາແຕ່ດົນນານ ຢ່າງນ້ອຍ ນຶ່ງຊົ່ວຄົນ.
- ແມ່ນຫລັກການລວມທີ່ຂະຫຍາຍຕົວຢ່າງກ້ວາງຂວາງ ໃນກຸ່ມຄົນ ຫລືຄອບຄົວ.
- ແມ່ນບຸກຄົນ, ກຸ່ມຄົນ ຫລືຄອບຄົວ ຖືວ່າປະເພນີສ້າງສິດ ແລະພັນທະລະຫວ່າງພວກເຂົາເຈົ້າ.

ມາດຕາ4 : ສິດຕາມປະເພນີ ແມ່ນຖືກປະຕິບັດ ຢ່າງອິດສະລະ.

ສິດຕາມປະເພນີກ່ຽວກັບການນໍາໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະຜະລິດຕະພັນຈາກປ່າໄມ້ ແມ່ນຖືກນໍາໃຊ້ຢ່າງອິດສະລະ ແລະຖືກຕ້ອງຕາມລະບຽບກົດໝາຍ ເຊັ່ນ: ການເກັບກູ້ຜະລິດຕະພັນ ປ່າໄມ້, ເອົາພືດມາຮັບໃຊ້ໃນຄອບຄົວ, ລ່າເນື້ອ ແລະຫາປາບາງປະເພດທີ່ ບໍ່ຫວງຫ້າມ ແລະສິດນໍາໃຊ້ອື່ນໆ ຕາມປະເພນີ ທີ່ບໍ່ຂັດກັບລະບຽບກົດໝາຍ ແລະບໍ່ໃຫ້ແຕະ ຕ້ອງເຖິງສິດຜົນປະໂຫຍດຂອງບຸກຄົນ ຫລືການຈັດຕັ້ງອື່ນ

ມາດຕາ5 : ການໂອນສິດຕາມປະເພນີ

ສິດຕາມປະເພນີ ໃນການນໍາໃຊ້ຊັບພະຍາກອນປ່າໄມ້ ສາມາດໂອນໄດ້ ໂດຍການສືບທອດມໍລະດົກ ແລະວິທີທາງອື່ນໆທີ່ຖືກຮັບຮູ້ຕາມປະເພນີຂອງກຸ່ມຄົນຫລືຄອບຄົວທີ່ເປັນພົນລະເມືອງລາວເທົ່ານັ້ນ.

ມາດຕາ6: ການຈໍາກັດ ແລະຖອນສິດ ຕາມປະເພນີ

ສິດຕາມປະເພນີ ສາມາດຖືກຮັບຮູ້, ຈໍາກັດ, ຂະຫຍາຍ ຫລື ລົບລ້າງໂດຍວິທີທາງ ດັ່ງລຸ່ມນີ້ ເທົ່ານັ້ນ.

ກ. ໂດຍການເສື່ອມຫາຍເທື່ອລະນ້ອຍ ຂອງປະເພນີທີ່ເກີດຂຶ້ນໃນເບື້ອງຕົ້ນ.

ຂ. ໂດຍການຕົກລົງເຫັນດີຂອງຜູ້ຖືສິດ ແລະຜູ້ຊົມໃຊ້ເອງ ໃຫ້ ຈໍາກັດ, ຂະຫຍາຍ, ແລກປ່ຽນ ແລະ ປະລະສິດ ດັ່ງກ່າວ.

ຄ. ໂດຍທາງກົດໝາຍ.

## ໝວດທີ II

## <u>ການປ້ອງກັນສິດ ແລະການແກ້ໄຂຂໍ້ຂັດແຍ່ງ ຕາມປະເພນີ</u>

ມາດຕາ 7: ການປ້ອງກັນສິດຕາມປະເພນີ

ສິດທິຕາມປະເພນີ ແມ່ນຖືກຮັບຮູ້ ແລະປະຕິບັດນຳໃຊ້ ລະຫວ່າງຜູ້ຊົມໃຊ້ ແລະບຸກຄົນທີ ສາມນັ້ນ ແມ່ນບໍ່ໃຫ້ຂັດຕໍ່ກັບລະບຽບກົດໝາຍ ທີ່ລັດໄດ້ປະກາດໃຊ້.

ມາດຕາ 8 : ການແກ້ໄຂຂໍ້ຂັດແຍ່ງຕາມປະເພນີ

ການຮຽກຮ້ອງເອົາສິດທີ່ຖືກຕ້ອງຕາມປະເພນີ ຫລືການຮ້ອງຟ້ອງເອົາສິດທີ່ຖືກຕ້ອງ ຂອງບຸກຄົນ ຫລືກຸ່ມຄົນ ແມ່ນໃຫ້ແກ້ໄຂໂດຍວິທີການຕາມປະເພນີ ທີ່ເປັນມູນເຊື້ອ ອັນດີຂອງປະຊາຊົນລາວ ບັນດາເຜົ່າ ໃຫ້ທຳການໄກ່ເກ່ຍຢູ່ຂັ້ນບ້ານ, ຖ້າແກ້ໄຂບໍ່ຕົກ ໃຫ້ນຳສະເໜີ ໃຫ້ສານປະຊາຊົນ ຕັດສິນ ຕາມລະບຽບກົດໝາຍ.

ມາດຕາ9: ການທົດແທນຄ່າເສຍຫາຍ.

ກົດໝາຍທີ່ຈຳກັດ ຫລືຖອນສິດຕາມປະເພນີ ທີ່ກ່ຽວກັບການນຳໃຊ້ທີ່ດິນປ່າໄມ້ ແລະຊັບພະຍາກອນປ່າໄມ້ ຈຳຕ້ອງໄດ້ ກຳນົດ ແລະທົດແທນ ຄ່າເສຍຫາຍ ທັງໝົດຕໍ່ທຸກບັນຫາ ຂອງຄວາມເສຍຫາຍໃນການດຳລົງຊີວິດຂອງຜູ້ຜະລິດ ແລະນຳໃຊ້ສິດ. ການທົດແທນຄ່າເສຍຫາຍ ອາດຈະເປັນເງິນ ຫລືການຕອບສະໜອງການດຳລົງຊີວິດແບບໃໝ່ ທີ່ສົມເຫດ ສົມຜົນ ເຊັ່ນ :

ກ. ໃຊ້ແທນຄ່າເສຍຫາຍຈາກການຍົກຍ້າຍໃນພາກຕົວຈິງ.

ຂ. ຊ່ວຍເຫລືອໃຫ້ແກ່ການປຸ່ງແປງ ຫລືຍົກຍ້າຍ ແລະອຸດໜູນໃນໄລຍະຍົກຍ້າຍ ໄປຢູ່ສະຖານທີ່ໃໝ່.

ຄ. ຊ່ວຍເຫລືອຜູ້ຖືສິດ ດ້ວຍການຍົກລະດັບຊີວິດການເປັນຢູ່ ຂອງເຂົາເຈົ້າໃຫ້ເທົ່າທຽມ ລະດັບເດີມ ທາງດ້ານຄວາມສາມາດສ້າງລາຍຮັບ ແລະການຜະລິດ.

ມາດຕາ10 : ສິດນຳໃຊ້ຊັບພະຍາກອນປ່າໄມ້ ຕາມປະເພນີ ຢູ່ໃນເຂດປ່າໄມ້ຂອງບ້ານ.

1. ສິດເກັບກູ້ຜະລິດຕະພັນຈາກປ່າໄມ້ ສຳລັບໃຊ້ສອຍ ຕາມຄວາມຈຳເປັນຂອງຄອບຄົວເຊັ່ນ : ອະນຸຍາດ ເຂົ້າຫາຢູ່ຫາກິນ ເພື່ອຊອກຫລົວ, ຊອກຟືນ, ເກັບເຫັດ, ຜັກປ່າ, ໜໍ່ໄມ້, ຢາພື້ນເມືອງ ຫລືເກັບກູ້ເຄື່ອງປ່າຂອງດົງອື່ນໆ ທີ່ບໍ່ນອນຢູ່ໃນບັນຊີ ທີ່ເກືອດຫ້າມ ຕາມທີ່ໄດ້ກຳນົດໃນສັນຍາຄຸ້ມຄອງປ່າໄມ້ຂັ້ນບ້ານ. ສ່ວນການຕັດຕົ້ນໄມ້ທຳມະຊາດ ເຊິ່ງບໍ່ແມ່ນປະເພດໄມ້ຫວງຫ້າມ ແລະຄຸ້ມຄອງ ເພື່ອຮັບໃຊ້ເຂົ້າໃນການສ້ອມແປງເຮືອນຊານຕ່າງໆ ທີ່ມີຄວາມຈຳເປັນ ຢູ່ໃນເຂດປ່າໄມ້ທີ່ອະນຸຍາດ ໃຫ້ຄຸ້ມຄອງ ແລະປົກປັກຮັກສານັ້ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງກະຊວງກະສິກຳ-ປ່າໄມ້ ທີ່ວາງອອກ.

2. ສິດເກັບກູ້ ຜະລິດຕະຜົນປ່າໄມ້ຊະນິດຕ່າງໆ ທີ່ມີຢູ່ຢ່າງອຸດົມສົມບູນ ໃນເຂດທີ່ບໍ່ໄດ້ຫວງຫ້າມ ເພື່ອເປັນສິນຄ້ານຳມາຂາຍຕ້ອງຢູ່ໃນຂອບເຂດ ປະລິມານຂອງຊັບພະຍາກອນປ່າໄມ້ ທີ່ສາມາດ ຄົງຕົວ ແລະຂະຫຍາຍຕົວໄດ້ໃນເຂດນັ້ນ ແຕ່ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງປ່າໄມ້ ໂດຍ ເຫັນດີຈາກອຳນາດການປົກຄອງ ຂັ້ນເມືອງ.
3. ສິດລ່າສັດ ແລະຫາປາ ທີ່ບໍ່ນອນຢູ່ໃນບັນຊີປະເພດຫວງຫ້າມ ຊຶ່ງຢູ່ນອກເຂດຫວງຫ້າມ ແລະ ປະຕິບັດ ຖືກຕ້ອງຕາມກົດໝາຍ.
4. ສິດນຳໃຊ້ທີ່ດິນປ່າໄມ້ຊຸດໂຊມ ຫລືດິນປອກໂລ້ນ ຕາມເນື້ອທີ່ທີ່ໄດ້ມີ ການສຳລວດ ຈັດສັນ ຕາມ ແຜນພັດທະນາເສດຖະກິດ ສັງຄົມ ຂອງບ້ານ ທີ່ໄດ້ ຜ່ານການເຫັນດີຈາກ ຄະນະກຳມະການ ແບ່ງດິນ, ແບ່ງປ່າ ຫລືການຈັດຕັ້ງທີ່ມີສິດອຳນາດຂັ້ນເມືອງ.

## ໝວດທີ III

## <u>ຂໍ້ກຳນົດສຸດທ້າຍ</u>

ມາດຕາ 11 : ອຳນາດການປົກຄອງຂັ້ນບ້ານ ມີສິດເຮັດກົດລະບຽບສະເພາະຕື່ມ ບົນພື້ນຖານ ເນື້ອໃນຈິດໃຈ ຂອງຂໍ້ຕົກລົງສະບັບນີ້.

ມາດຕາ12: ຂໍ້ຕົກລົງສະບັບນີ້ ມີຜົນໃຊ້ໄດ້ ນັບຕັ້ງແຕ່ມີການລົງລາຍເຊັນ ເປັນຕົ້ນໄປ. ຂໍ້ຕົກລົງທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ຫາກ ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນໃຫ້ລົບລ້າງ.

ວຽງຈັນ, ວັນທີ 07 MAR 1996

ລັດຖະມົນຕີ ກະຊວງກະສິກຳ-ປ່າໄມ້

ຮສະຕວາດ ແກ້ວບຸບພັນ